ເຮັດວຽກຮ່ວມກັນ ດ້ານ

# ຄວາມສຳເຣັດຜົນທາງການຮຽນການສຶກສາ
# ສຳຫລັບ
# ນັກຮຽນທຸກຄົນ

ໜັງສືຄູ່ມື ສຳຫລັບ
ໂຮງຮຽນຣັຖເມືອງຊີອາໂຕ,
ບັນດາພໍ່ແມ່ ແລະ ຊຸມຊົນ

ctac

ໜັງສືຄູ່ມືອັນນີ້ ອອກໃຫ້ຈາກໂຮງຮຽນຣັຖເມືອງຊີອາໂຕ ໃນພາສາດັ່ງຕໍ່ລົງໄປນີ້ ຄື:

- Amharic
- Cambodian
- Chinese
- Lao
- Somali
- Spanish
- Tigrigna
- Vietnamese

ctac

© Community Training and Assistance Center, 2005
Boston, MA

In partnership with: ໃນຄວາມຮ່ວມເປັນຂາຄູ່ກັບ
The Family Support Worker Program ໂຄງການຂອງນັກໃຫ້ຄວາມອຸປະຖັມແກ່ຄອບຄົວ
Seattle Public Schools ໂຮງຮຽນຣັຖເມືອງຊີອາໂຕ
Seattle, WA ນະຄອນຊີອາໂຕ, ຣັຖວໍຊິງຕັນ

With funding provided by: ດ້ວຍການໃຫ້ທຶນໂດຍ
U.S. Department of Education ກະຊວງສຶກສາຂອງສະຫະຣັຖ
**Fund for the Improvement of Education** ກອງທຶນ ສຳຫລັບ
ໃຊ້ໃນການປັບປຸງການສຶກສາ

## ຄຳແນະນຳ

ເດັກນ້ອຍທຸກໆຄົນ ສາມາດຮຽນສຳເລັດໃນການສຶກສາໄດ້

ໜັງສືຄູ່ມືຫົວນີ້ ໄດ້ອອກມາສເນີໃຫ້ ໃນຖານະເປັນການບອກແນະນຳອັນໜຶ່ງ ສຳຫລັບພໍ່ແມ່, ພະນັກງານໂຮງຮຽນ ແລະ ອົງການຈັດຕັ້ງຊຸມຊົນ ຊຶ່ງມີຄວາມສົນໃຈໃນຄວາມອຸປະຖັມຄ້ຳຊູ ແກ່ພວກນັກຮຽນ ໃຫ້ສຳເລັດຜົນດີ ໃນການສຶກສາຮ່ຳຮຽນ.

ຜູ້ເປັນພໍ່ແມ່,[1] ໂຮງຮຽນ ແລະ ອົງການຈັດຕັ້ງຊຸມຊົນຕ່າງໆ[2] ກໍໄດ້ປະກອບສ່ວນເຂົ້າໃນຄວາມສຳເລັດຜົນຂອງນັກຮຽນນີ້ ດ້ວຍ ວິທີຕ່າງໆກັນ. ແຕ່ລະອັນ ກໍມີເລື້ອງທີ່ໜ້າວິພາກວິຈານ ແລະ ເຈດຈຳນົງທີ່ສຳຄັນອັນໜຶ່ງ.
ດ້ວຍຄວາມສມານສາມັກຄີແລ້ວ ເພິ່ນກໍເຮັດໃຫ້ສຳເລັດຜົນຣະບົບອຸປະຖັມຊ່ວຍເຫລືອດ້ານການສຶກສາ ສຳຫລັບນັກຮຽນນີ້ໄດ້.

ດ້ວຍການເຮັດວຽກປອງດອງສາມັກຄີກັນແລ້ວ ບັນດາໂຮງຮຽນ, ອົງການຈັດຕັ້ງຊຸມຊົນ ແລະ ບັນດາຄອບຄົວ ກໍສາມາດສ້າງຂື້ນມາໄດ້ :

- ຄວາມຄອງຫວັງສູງ ສຳຫລັບນັກຮຽນໝົດທຸກຄົນ;
- ບັນຍາກາດໃນການຖະນຸຖນອມ ໃນການອຸປະຖັມຄ້ຳຊູການຮ່ຳຮຽນ ຢູ່ໃນໂຮງຮຽນ, ຢູ່ທີ່ບ້ານ ແລະ ຢູ່ໃນສັງຄົມຊຸມຊົນ;
- ໂຄງການສຶກສາຮ່ຳຮຽນທີ່ມີຄຸນພາບສູງສົ່ງ ດ້ວຍແຫລ່ງຊັພຍາກອນ ແລະ ອຸປກອນຕ່າງໆ ທີ່ເໝາະສົມ, ມີນາຍຄຣູ ຫລື ພະນັກງານສິດສອນທີ່ມີຄວາມຮູ້ຄວາມຊຳນານ ແລະ ຍັງມີການຊ່ວຍເຫລືອແບບພິເສດອີກ ໃນເມື່ອຕ້ອງການ ທີ່ຈະຊ່ວຍໃຫ້ ພວກນັກຮຽນໄດ້ຮຽນ, ແລະ
- ທີມດ້ານການສຶກສາອັນໜຶ່ງ ທີ່ປະກອບດ້ວຍ (ນັກຮຽນ, ໂຮງຮຽນ, ຄອບຄົວ ແລະ ຊຸມຊົນໃນສັງຄົມ) ຊຶ່ງໃຫ້ຄວາມປະສານງານຮ່ວມໄມ້ຮ່ວມມືໃນຄວາມພະຍາຍາມນັ້ນ.

ການແລກປ່ຽນໃຫ້ເລື້ອງຂ່າວແກ່ກັນ, ຕັ້ງຄຳຖາມ ແລະ ຊອກຄົ້ນຫາຄຳຕອບ ຫລື ວິທີແກ້ບັນຫາຕ່າງໆ ນັ້ນ ແມ່ນກຸນແຈ ບາດກ້າວເຂົ້າໄປສູ່ ການຮ່ວມສ່ວນນຳກັນຣະຫວ່າງ ພໍ່ແມ່ - ໂຮງຮຽນ - ຊຸມຊົນ ຊຶ່ງໃຫ້ການສນັບສນູນຊຸກຍູ້ ຄວາມກ້າວໜ້າໃນການຮ່ຳຮຽນຂອງນັກຮຽນ ສຳຫລັບເດັກນ້ອຍແຕ່ລະຄົນ ແລ/ະ ແຕ່/ະໂຮງຮຽນ.

---

[1] ຄຳວ່າ **"ພໍ່ແມ່"** ກວມລວມເອົາທັງ ຜູ້ລ້ຽງດູເບິ່ງແຍງເບື້ອງຕົ້ນ ຫລື ຜູ້ປົກຄອງ, ພໍ່ແມ່ບຸນທຳ ແລະ ພໍ່ຕູ່ ແມ່ຕູ້ ອີກດ້ວຍ.

[2] **"ອົງການຈັດຕັ້ງ"** ແມ່ນ ຣັຖບານ, ກຸ່ມທີ່ບໍ່ເອົາດອກເບ້ຍກຳໄລ ແລະ ທາງສາສນາ ຊຶ່ງໃຫ້ຄວາມຊ່ວຍເຫລືອຊຸກຍູ້ແກ່ຄອບຄົວ ແລະ ຄວາມສຳເຣັດຜົນຂອງນັກຮຽນ ດ້ວຍຫລາຍວິທີຕ່າງໆກັນ. ຕົວຢ່າງ ລວມທັງສູນກາງຄອບຄົວ, ສູນກາງເພື່ອນບ້ານໃກ້ຄຽງ, ອົງການບໍຣິການທາງສັງຄົມ, ອົງການຈັດຕັ້ງຊາວໜຸ່ມ, ສະມາຄົມພໍ່ແມ່, ໂບດ ແລະ ອົງການຈັດຕັ້ງອື່ນໆ ຊຶ່ງເອົາໃຫ້ໂຄງການຂອງຊຸມຊົນ ຫລື ການບໍຣິການຕ່າງໆນີ້.

## ສາລະບານ

ໜັງສືຄູ່ມືຫົວນີ້ ມີຢູ່ແປດຫົວຂໍ້ເລື້ອງ ທີ່ກ່ຽວຂ້ອງກັບຄວາມສຳເຣັດຜົນທາງການຮ່ຳຮຽນຂອງນັກຮຽນ. ສຳຫລັບແຕ່ລະຫົວຂໍ້ເລື້ອງ ມີເລື້ອງ ແລະ ເຄັດລັບສຳຄັນໄວ້ໃຫ້ພ້ອມ. ຫົວຂໍ້ນັ້ນ ສາມາດເອົາໃຊ້ໄດ້ ຄືກັບບ່ອນເລີ່ມຕົ້ນ ສຳຫລັບການປະຊາສັມພັນຣະຫວ່າງພໍ່ແມ່, ພະນັກງານໂຮງຮຽນ ແລະ ອົງການຈັດຕັ້ງຊຸມຊົນ. ຍິ່ງໄປກວ່ານັ້ນແລ້ວ ໜັງສືຄູ່ມືນີ້ ຍັງອຳນວຍໃຫ້ ດ້ານແຫລ່ງຊັພຍາກອນ ແລະ ການຕິດຕໍ່ທີ່ເປັນປໂຍດດີອີກດ້ວຍ..


| <u>ຫົວຂໍ້ເລື້ອງ</u> | <u>ໜ້າ</u> |
|---|---|
| 1. ຕຶກອາຄານຮຽນ ກໍຄືເປັນບ່ອນຍິນດີຕ້ອນຮັບ, ບ່ອນປອດໄພແຫ່ງການຮ່ຳຮຽນ | 3 |
| 2. ຫ້ອງຮຽນ ບ່ອນຮຽນຮູ້ | 5 |
| 3. ໃບລາຍງານຄະແນນການຮຽນ ແລະ ລາຍງານຄວາມກ້າວໜ້າ | 6 |
| 4. ຂໍ້ສອບເສັງມາດຕະຖານ | 7 |
| 5. ແຜນການຮຽນ ສຳຫລັບນັກຮຽນສ່ວນບຸກຄົນ | 9 |
| 6. ໂຄງການຕ່າງໆ ແລະ ຄວາມຊ່ວຍເຫລືອ ສຳຫລັບນັກຮຽນ | 11 |
| 7. ການປັບປຸງຂອງເຂດສຶກສາ | 13 |
| 8. ຄຳຖາມ ແລະ ຂໍ້ຂ້ອງໃຈຕ່າງໆ | 15 |

| <u>ແຫລ່ງຊັພຍາກອນ ແລະ ການຕິດຕໍ່</u> | <u>ໜ້າ</u> |
|---|---|
| ກວດກາເບິ່ງຄືນກ່ຽວເລື້ອງ ບໍ່ມີເດັກຄົນໃດເລີຍໄດ້ຖືກປ່ອຍປະລະຖິ້ມໃຫ້ຢູ່ຂ້າງຫລັງ NCLB | 1 |
| ນະໂຍບາຍເລື້ອງການເຂົ້າຮ່ວມເປັນຂາຄູ່ຂອງຄອບຄົວ ໃນໂຮງຮຽນຣັຖເມືອງຊີອາໂຕ | 16 |
| ແຫລ່ງຊັພຍາກອນເພີ້ມເຕີມອີກ | 17 |


ກະຣຸນາແລກປ່ຽນເລື້ອງຂ່າວ ຢູ່ໃນໜັງສືຄູ່ມືນີ້ ກັບຄົນອື່ນ ແບບເປັນຄວາມຄິດຂອງທ່ານເອງ ແລະ ທັງເປັນການໃຫ້ຄຳແນະນຳອີກດ້ວຍ.

## ກວດກາເບິ່ງຄືນກ່ຽວເລື້ອງ ບໍ່ມີເດັກຄົນໃດເລີຍໄດ້ຖືກປ່ອຍປະລະຖິ້ມໃຫ້ຢູ່ຂ້າງຫລັງ NCLB

NCLB ແມ່ນກົດໝາຍຂອງການສຶກສາແຫ່ງຊາດ. ຈຸດປະສົງຂອງ NCLB ແມ່ນເພື່ອອຳນວຍ ໃຫ້ນັກຮຽນໝົດທຸກຄົນ ດ້ວຍ “ໂອກາດອັນດີທີ່ຍຸຕິທັມ, ສເມີພາກ ແລະ ມີຄວາມສຳຄັນ ໃນການຮັບເອົາການສຶກສາທີ່ມີຄຸນນະພາບສູງ.” ດ້ວຍ NCLB ນີ້ ທາງໂຮງຮຽນຣັຖ ຕ້ອງສະແດງອອກ ເຖິງຄວາມກ້າວໜ້າດ້ານການຮ່ຳຮຽນຂອງນັກຮຽນ. ທາງໂຮງຮຽນຕ້ອງມີບັນດານາຍຄຣູຜູ້ທີ່ມີຄຸນນະວຸດທິ ແລະ ສະແດງອອກເຖິງວ່າ ພວກຕືນນັ້ນປອດໄພດີແລ້ວ.

NCLB ນີ້ ເອົາໃຫ້ຜູ້ເປັນພໍ່ແມ່ ແລະ ຊຸມຊົນ ສິດທິທີ່ຕ້ອງໄດ້ແຈ້ງບອກກ່ຽວກັບຄວາມກ້າວໜ້າຂອງນັກຮຽນ ແລະ ໂຮງຮຽນທັງຫລາຍ, ແລະ ສິດທິ ທີ່ເຂົ້າມາຮ່ວມນຳ ໃນແຜນການຕ່າງໆ ແລະ ແກ້ໄຂບັນຫາອີກດ້ວຍ. NCLB ນີ້ ອຳນວຍໃຫ້ພື້ນຖານອັນໜຶ່ງ ສຳຫລັບໂຮງຮຽນ, ພໍ່ແມ່ ແລະ ຊຸມຊົນອັນກວ້າງຂວາງ ເພື່ອເຮັດວຽກຮ່ວມກັນ ສຳຫລັບການສຶກສາຂອງພວກເດັກນ້ອຍ ແລະ ການປັບປຸງໂຮງຮຽນ ແລະ ເຂດສຶກສາໃຫ້ດີຂື້ນ.

ກົດໝາຍຂອງ NCLB ນີ້ ໄດ້ຖືກຜ່ານມາແລ້ວ ໂດຍສະພາ Congress ຂອງສະຫະຣັຖ ໃນປີ 2002, ໃນປັດຈຸບັນນີ້ໄດ້ຖືກນຳໃຊ້ກັບ ຢູ່ຕາມໂຮງຮຽນຣັຖເມືອງຊີອາໂຕ ແລະ ທົ່ວທັງປະເທດ. ຕໍ່ໄປນີ້ແມ່ນ ບົດບັນຍັດ ແລະ ຂໍ້ກຳນົດບາງປະການຂອງ NCLB.



| | |
|---|---|
| **ຄວາມກ້າວໜ້າຂອງນັກຮຽນ** | • ນັກຮຽນໃນໂຮງຮຽນຣັຖທັງຫລາຍ ເຮັດການສອບເສັງຂັ້ນມາດຕະຖານ ເພື່ອວັດແທກວ່າ ສິ່ງໃດແດ່ທີ່ພວກເຂົາໄດ້ຮຽນມາແລ້ວ.<br>• ຜົນນັ້ນ ສາມາດເອົາມາປຽບທຽບກັນໄດ້ ໂດຍໂຮງຮຽນ ແລະ ຄວາມກ້າວໜ້າ ທີ່ວັດແທກປະຈຳປີ.<br>• ໂຮງຮຽນທັງຫລາຍຢູ່ໃນຣັຖວໍຊິງຕັນນີ້ ກໍໃຊ້ຂໍ້ສອບເສັງຂອງ WASL . ທາງໂຮງຮຽນກໍອາດໃຊ້ຂໍ້ສອບເສັງອື່ນໆ ສຳຫລັບການວັດແທກຄວາມກ້າວໜ້າ ຂອງນັກຮຽນບາງຄົນ ທີ່ດ້ອຍສມັຖພາບ.<br>• ທາງໂຮງຮຽນແຈກຢາຍຜົນການສອບເສັງຂອງນັກຮຽນແບບສ່ວນຕົວໃຫ້ ແກ່ພໍ່ແມ່, ທີ່ສະແດງອອກໃຫ້ຮູ້ເຖິງຄວາມຕ້ອງການສະເພາະຂອງເດັກນັ້ນ. |
| **ຄຸນສົມບັດຂອງນາຍຄຣູ** | • ໃນຕອນທ້າຍຂອງສົກສຶກສາ 2005-2006 ນີ້ ພວກນາຍຄຣູທີ່ສອນວິຊາການຕ່າງໆທັງໝົດ ຕ້ອງມີຄຸນນະວຸດທິຢ່າງສູງສົ່ງ.<br>• ນາຍຄຣູຜູ້ມີຄຸນນະວຸດທິຢ່າງສູງສົ່ງນີ້ ແມ່ນຜູ້ທີ່ມີໃບປະກາດສະນີຍະບັດຄົບຖ້ວນ, ມີປຣິນຍາຕຣີ ແລະ ສະແດງອອກເຖິງຄວາມສາມາດເກັ່ງໃນຄວາມຮູ້ວິຊາການ ແລະ ການສິດສອນອີກດ້ວຍ. |
| **ການສິດສອນຂອງທາງໂຮງຮຽນ** | • ທຸກໆປີໃດ ທາງເຂດສຶກສາກໍອຳນວຍໃຫ້ເລື້ອງກ່ຽວກັບ ການສິດສອນຂອງທາງໂຮງຮຽນ ແລະ ຄຸນສົມບັດຂອງນາຍຄຣູ ຢູ່ໃນບັດລາຍງານຂອງໂຮງຮຽນ ຊຶ່ງມີໃຫ້ ແກ່ພໍ່ແມ່ ແລະ ຊຸມຊົນ.<br>• ໃນເມື່ອທາງໂຮງຮຽນແຫ່ງໜຶ່ງຫາກສະແດງອອກເຖິງ ການກະທຳດ້ານວິຊາການອ່ອນແອ ແລະ ຂາດຄວາມກ້າວໜ້າ ເປັນເວລາສອງປີ ຫລື ຫລາຍກວ່ານັ້ນແລ້ວ:<br>– ທາງເຂດສຶກສາ ຕ້ອງແຈ້ງໃຫ້ພໍ່ແມ່ຊາບນຳ ແລະອະທິບາຍວ່າ ພໍ່ແມ່ຄວນເຂົ້າຮ່ວມພົວພັນນຳໄດ້ແນວໃດ ໃນຄວາມພະຍາຍາມປັບປຸງໂຮງຮຽນນີ້.<br>– ຖ້າທາງໂຮງຮຽນຫາກຍັງສືບຕໍ່ສະແດງອອກໃຫ້ເຫັນຄວາມບົກພ່ອງຂອງຄວາມກ້າວໜ້ານີ້ຢູ່ ໃນປີທີສາມແລ້ວ ນັກຮຽນນັ້ນອາດຈະໄດ້ຮັບສິດ ຮັບເອົາການຊ່ວຍເຫລືອພິເສດດ້ານວິຊາການ (ບໍຣິການດ້ານການສຶກສາແບບເພີ່ມເຕີມອີກ).<br>– ພໍ່ແມ່ໄດ້ຮັບການເລືອກເອົາສຳຫລັບການຍົກຍ້າຍນັກຮຽນໄປຫາໂຮງຮຽນທີ່ມີການສິດສອນຣະດັບສູງກວ່າ. |
| **ຄວາມປອດໄພຂອງໂຮງຮຽນ** | • ເລື້ອງກ່ຽວກັບຄວາມປອດໄພຂອງໂຮງຮຽນ ແລະ ການໃຊ້ຢາເສບຕິດ ແມ່ນໄດ້ຮິບໂຮມເອົາໂດຍ ຂັ້ນຣັຖ ແລະ ມີໃຫ້ໄດ້ແກ່ພໍ່ແມ່, ໂຮງຮຽນ ແລະ ຜູ້ນຳຊຸມຊົນທັງຫລາຍ.<br>• ຜູ້ເປັນພໍ່ແມ່ຂອງນັກຮຽນ ຜູ້ຊຶ່ງເປັນຜູ້ຮັບເຄາະ ເລື້ອງຄວາມກະທຳຜິດຮຸນແຮງ ຢູ່ທີ່ໂຮງຮຽນ ຫລື ເຂົ້າຮ່ວມ "ໂຮງຮຽນທີ່ເປັນອັນຕະລາຍຢູ່ຕລອດ" ແມ່ນໄດ້ຮັບບອກໃຫ້ເລືອກເອົາໂຮງຮຽນອື່ນ. |
| **ການປັບປຸງໂຮງຮຽນ** | • ທາງເຂດສຶກສາກໍຈຳເປັນໄດ້ຮຽກຮ້ອງໃຫ້ພໍ່ແມ່ເຂົ້າຮ່ວມນຳ ໃນການວາງແຜນການປັບປຸງການສຶກສາ ຢູ່ຕາມໂຮງຮຽນສ່ວນຕົວ ແລະ ວາງແຜນການປະຕິຮູບຊຶ່ງມີຜົນກະທົບໃສ່ ການສຶກສາ ຕລອດທັງລະບົບຂອງ ໂຮງຮຽນນັ້ນ. |

# 1. ຕຶກອາຄານໂຮງຮຽນ ກໍເປັນບ່ອນທີ່ຍິນດີຕ້ອນຮັບ, ເປັນບ່ອນປອດໄພໃນການຮໍ່າຮຽນ

## ການມາຢ້ຽມຢາມໂຮງຮຽນ

ທາງໂຮງຮຽນຣັຖເມືອງຊີອາໂຕ ກໍໄດ້ໃຫ້ກໍາລັງໃຈແກ່ການເຂົ້າມາມີສ່ວນຮ່ວມຂອງພໍ່ແມ່ ແລະ ຊຸມຊົນ ໃນ ຫ້ອງຮຽນ, ໃນກິຈກັມໂຮງຮຽນ ແລະ ກອງປະຊຸມທີ່ທາງໂຮງຮຽງເປັນຜູ້ອຸປະຖັມ. ຍິນດີຕ້ອນຮັບບັນດາພໍ່ແມ່ ໃຫ້ມາສັງເກດເບິ່ງກິຈກັມຕ່າງໆຂອງຫ້ອງຮຽນ ຊຶ່ງຄວນວາງເປັນຕາຕະລາງໄວ້ກ່ອນລ່ວງໜ້າ. ພໍ່ແມ່ ແລະ ແຂກຜູ້ອື່ນໆ ຕ້ອງເຂົ້າມາໂດຍຜ່ານທາງຫ້ອງການບໍຣິຫານ ເວລາເພິ່ນມາຮອດອາຄານໂຮງຮຽນນັ້ນ.

## ນະໂຍບາຍຂອງຄວາມປອດໄພ ແລະ ຣະບຽບວິໄນ

ແຕ່ລະໂຮງຮຽນກໍມີນະໂຍບາຍຂອງຄວາມປອດໄພ ແລະ ຣະບຽບວິໄນ ເພື່ອຮັກສາໄວ້ຊຶ່ງບ່ອນຮໍ່າຮຽນໃນທາງສ້າງສັນ ເປັນຣະບຽບຮຽບຮ້ອຍດີ. ໜັງສືນະໂຍບາຍນີ້ ມີໄວ້ໃຫ້ທ່ານ ຕາມການຮ້ອງຂໍເອົາ ຢູ່ທີ່ຫ້ອງການ ບໍຣິຫານຂອງໂຮງຮຽນ. ພໍ່ແມ່, ພະນັກງານໂຮງຮຽນ ແລະ ຜູ້ນໍາຊຸມຊົນ ຄວນໃຫ້ຄຸ້ນເຄີຍກັບນະໂຍບາຍ ອັນນີ້, ຈົ່ງຖາມ ແລະ/ຫລື ໃຫ້ຄວາມຄິດຄວາມເຫັນຕ່າງໆ ເພື່ອປັບປຸງໃຫ້ດີຂື້ນ.

ກົດໝາຍເລື້ອງ ບໍ່ມີເດັກຄົນໃດເລີຍໄດ້ຖືກປ່ອຍປະລະຖິ້ມຢູ່ຂ້າງຫລັງນີ້ (NCLB) ຈໍາເປັນຕ້ອງໃຫ້ມີເລື້ອງທີ່ ຈະຮ່ວມແລກປ່ຽນກັບ ບັນດາພໍ່ແມ່ ແລະ ສະມາຊິກຊຸມຊົນ ກ່ຽວກັບ ຄວາມປອດໄພຂອງໂຮງຮຽນ ແລະ ການ ໃຊ້ຢາເສບຕິດຂອງນັກຮຽນ ເພື່ອວ່າ ພວກເຂົາຈະສາມາດເຮັດວຽກ ກັບທາງໂຮງຮຽນ ເພື່ອປັບປຸງບັນຫາ ຕ່າງໆໃຫ້ດີຂື້ນ.



### ເຄັດລັບ

- **ພໍ່ແມ່, ພະນັກງານໂຮງຮຽນ, ນັກຮຽນ** ແລະ **ສະມາຊິກຂອງຊຸມຊົນ** ຈາກຫລາຍພື້ນຖານຄວາມເປັນມາຕ່າງກັນ ນັບຖືຊຶ່ງກັນແລະກັນ ແລະ ແລກປ່ຽນປະສົບຜະການຂອງຕົນ ແລະ ຄວາມຊໍານິຊໍານານ ແບບພິເສດຂອງຕົນ ກັບຄົນອື່ນໆ.
- **ໂຮງຮຽນ:**
  - ເອົາໃຫ້ມີ ເຫດການຕ່າງໆສໍາຫລັບຄອບຄົວ ລວມທັ້ງການເປີດໃຫ້ມາຢ້ຽມຢາມໂຮງຮຽນ ຫລື ຄັ້ງສໍາຄັນແຫ່ງຕອນຄໍ່າໃນການກັບຄືນເຂົ້າມາໂຮງຮຽນ.
  - ອໍານວຍໃຫ້ມີບ່ອນຮັບຝາກເດັກ ແລະ ບໍຣິການແປພາສາໃຫ້ດ້ວຍ.
  - ອໍານວຍໃຫ້ມີ ບ່ອນປະຊຸມອັນໜຶ່ງ ທີ່ຫ່າງຈາກສິ່ງລົບກວນຕ່າງໆ ຊຶ່ງເປັນບ່ອນທີ່ ພໍ່ແມ່ ແລະ / ຫລື ອົງການຈັດຕັ້ງຊຸມຊົນ ສາມາດເຮັດວຽກຮ່ວມກັນໄດ້ກັບພະນັກງານໂຮງຮຽນ ແລະ ນັກຮຽນ.
  - ບາງຄັ້ງກໍນໍາພາເຫດການຄັ້ງສໍາຄັນຂອງໂຮງຮຽນ ແລະ ການປະຊຸມ ຢູ່ຕາມສະຖານທີ່ໃກ້ຄຽງ ແລະ ສະຖານທີ່ຂອງຊຸມຊົນອື່ນໆ ບ່ອນທີ່ຄອບຄົວທັງຫລາຍ ສາມາດເຂົ້າຮ່ວມໄດ້ສະດວກນັ້ນ.
  - ນໍາເອົາຄວາມຮູ້ດ້ານຫລາຍຊາດ - ຫລາຍວັທນະທັມ ເຂົ້າມາສູ່ວຽກງານການສຶກສາ, ການສເລີມສລອງຕ່າງໆ ແລະ ສະພາບແວດລ້ອມຂອງໂຮງຮຽນ.
- **ພໍ່ແມ່** ແລະ **ທາງໂຮງຮຽນ** ຮູ້ຈັກວ່າຊິຕິດຕໍ່ຊຶ່ງກັນແລະກັນໄດ້ແນວໃດ ໃນກໍຣະນີສຸກເສີນ.
- **ພໍ່ແມ່** ຮູ້ຈັກ ບ່ອນລົດບັສຢຸດ ແລະ / ຫລື ຫົນທາງຍ່າງທີ່ປອດໄພ ສໍາຫລັບນັກຮຽນ.
- **ພໍ່ແມ່** ແລະ **ພະນັກງານໂຮງຮຽນ** ສົນທະນາກັນ ເລື້ອງຄວາມປອດໄພ ແລະ ຄວາມເປັນຫ່ວງເປັນໄຍນໍາຣະບຽບວິໄນ ແລະ ໃນເມື່ອເຮັດຮ່ວມກັນແລ້ວ ເພິ່ນກໍຫາພົບການແກ້ໄຂບັນຫາໄດ້.

<u>ຄວາມຄິດຄວາມເຫັນອື່ນໆ:</u>

- ____________________________
- ____________________________

## 2. ການຮ່ຳຮຽນຢູ່ໃນຫ້ອງຮຽນ

### ການຮຽນຂອງນັກຮຽນ

ພໍ່ແມ່, ພະນັກງານໂຮງຮຽນ ແລະອົງການຈັດຕັ້ງຊຸມຊົນ ສາມາດຊ່ວຍເຫລືອນັກຮຽນໄດ້ດີຂື້ນ ຖ້າເພິ່ນຫາກຮູ້ວ່າ ສິ່ງໃດທີ່ນັກຮຽນຄອງຫວັງເອົາ ຈາກການຮຽນຢູ່ໃນຫ້ອງຮຽນນັ້ນ.

ທາງໂຮງຮຽນຣັຖເມືອງຊີອາໂຕ ກໍໄດ້ສ້າງ **ມາດຕະຖານການຮຽນຂື້ນ** ຊຶ່ງບອກໄດ້ວ່າ *ສິ່ງໃດ* ທີ່ນັກຮຽນຕ້ອງການຈະຮຽນເອົາ ໃນແຕ່ລະວິຊາຮຽນ ຕາມແຕ່ລະຣະດັບຊັ້ນນັ້ນ. ຂັ້ນມາດຕະຖານອັນນີ້ ກໍຖືກັບການຊີ້ນຳຂອງຣັຖ ແລະ ຄວາມຕ້ອງການ ຂອງທ້ອງຖິ່ນແລ້ວ. ສຳຫລັບເອົາ ສຳເນົາພິມອອກມາຂອງມາດຕະຖານການຮຽນ ຫລື ຄຳຖາມຕ່າງໆ ກ່ຽວກັບຂັ້ນມາດຕະຖານ ເຫລົ່ານີ້ນັ້ນ ຈົ່ງຖາມນາຍຄຣູ ຫລື ຫົວໜ້າໂຮງຮຽນ ຫລື ເຂົ້າເບິ່ງໄດ້ຕາມເວັບຊ່າຍຂອງໂຮງຮຽນຣັຖເມືອງຊີອາໂຕ ເພື່ອ ອ່ານເບິ່ງ ມາດຕະຖານນີ້ ສຳຫລັບແຕ່ລະວິຊາຮຽນ ຕາມຣະດັບຊັ້ນ.
www.seattleschools.org/area/acastan/index.dxml

**ເຄັດລັບ**

- **ທາງໂຮງຮຽນ** ກໍເຊື້ອເຊີນບັນດາພໍ່ແມ່ ໃຫ້ມາຢ້ຽມຢາມເບິ່ງຫ້ອງຮຽນ.
- **ພໍ່ແມ່** ກໍໄປໂຮງຮຽນ ເພື່ອຊອກຫາພົບວ່າ ນາຍຄຣູເພິ່ນສິດສອນກັນຫຍັງແດ່ ແລະ ເບິ່ງວ່າ ພວກນັກຮຽນ ເຂົາຮຽນກັນຫຍັງແດ່.
- **ພໍ່ແມ່** ແລະ **ນາຍຄຣູ** ສົນທະນາກັນວ່າ ສິ່ງໃດທີ່ນັກຮຽນຄອງຫວັງຈະຮຽນເອົາ ແລະ ວິທີໃດ ເດັກແຕ່ລະຄົນຮຽນ ໄດ້ດີ ຢູ່ຕາມການແນະນຳຂອງທາງໂຮງຮຽນ, ກອງປະຊຸມພໍ່ແມ່ - ນາຍຄຣູ ແລະ/ຫລື ຕາມການປະຊຸມອື່ນໆ.
- **ບັນດາພໍ່ແມ່** ແລະ **ອົງການຈັດຕັ້ງຊຸມຊົນຕ່າງໆ** ກໍອຳນວຍໃຫ້ມີບ່ອນທີ່ງຽບສງົບດີ ສຳຫລັບນັກຮຽນ ເຮັດວຽກຢູ່ທີ່ບ້ານ.
- **ພໍ່ແມ່** ກໍຖາມນັກຮຽນວ່າ ພວກເຂົາຮຽນຫຍັງແດ່ຢູ່ໃນຫ້ອງຮຽນ (ຢ່າງນ້ອຍກໍອາທິດລະເທື່ອ) ແລະ ກວດເບິ່ງຄືນ ປື້ມຂຽນ ພ້ອມອຸປະກອນຕ່າງໆ ທີ່ນັກຮຽນໃຊ້.
- **ນາຍຄຣູ** ກໍແຈ້ງບອກໃຫ້ພວກນັກຮຽນ, ບັນດາພໍ່ແມ່ ແລະ ຄູ່ຂາຂອງຊຸມຊົນອື່ນໆຊາບນຳ ກ່ຽວກັບ ກິຈກັມຕ່າງໆ, ໂຄງການ ແລະ ວຽກການບ້ານ ທີ່ໄດ້ວາງແຜນອອກ ສຳຫລັບພາກຮຽນນັ້ນ ຫລື ປີນັ້ນ.
- **ບັນດາພໍ່ແມ່** ແລະ **ອົງການຈັດຕັ້ງຊຸມຊົນ** ກໍຖາມພະນັກງານໂຮງຮຽນວ່າ ມີສິ່ງໃດແດ່ ທີ່ເພິ່ນສາມາດເຮັດໄດ້ ເພື່ອຊ່ວຍນັກຮຽນຮຽນ.

**ຄວາມຄິດຄວາມເຫັນອື່ນໆ:**

- ______________________________
- ______________________________



## 3. ໃບລາຍງານຄະແນນ ແລະ ລາຍງານການຮຽນ

### ຄວາມກ້າວໜ້າຂອງນັກຮຽນ

ທາງໂຮງຮຽນຣັຖເມືອງຊີອາໂຕ ກໍອຳນວຍໃຫ້ແກ່ພໍ່ແມ່ທຸກຄົນ ດ້ວຍການລາຍງານ
ເລື້ອງຄວາມກ້າວໜ້າຂອງນັກຮຽນ ໃນຮູບແບບຂອງໃບລາຍງານຄະແນນ ແລະ /ຫລື ຄວາມກ້າວໜ້າ ຫລາຍເທື່ອຕໍ່ປີ.
ບັນດານາຍຄຣູກໍຕັດສິນວ່າ ນັກຮຽນ ຮຽນດີປານໃດຢູ່ໃນຫ້ອງຮຽນ ໂດຍອີງໃສ່ຜົນການສອບເສັງ, ວຽກການບ້ານ, ໂຄງການອື່ນໆ ແລະ ການເຂົ້າຮ່ວມນຳຢູ່ໃນ ຫ້ອງຮຽນ.

ນະໂຍບາຍຂອງທາງໂຮງຮຽນຣັຖເມືອງຊີອາໂຕນີ້ ບອກໄວ້ວ່າ ນັກຮຽນໄດ້ເລື່ອນຂື້ນຊັ້ນສູງ ໃນເມື່ອພວກເຂົາ ຫາກສຳເຣັດຜົນດີຕາມຂໍ້ກຳນົດດ້ານວິຊາການ ຂອງຊັ້ນເກົ່າຜ່ານມານັ້ນ.

**ເຄັດລັບ**

- **ທາງໂຮງຮຽນ** ກໍອຳນວຍໃຫ້ມີໃບລາຍງານຄະແນນ ແລະ ຄວາມກ້າວໜ້າ ຊຶ່ງເປັນສິ່ງທີ່ແຈ້ງຂາວດີ ແລະ ເຂົ້າໃຈໄດ້ແກ່ພໍ່ແມ່.
- **ພໍ່ແມ່** ກໍຮູ້ຈັກວ່າ ເວລາໃດຈະອອກໃບລາຍງານຄະແນນ ຫລື ຄວາມກ້າວໜ້ານີ້ ມາໃຫ້ທີ່ບ້ານ.
- **ນາຍຄຣູ** ກໍພ້ອມແລ້ວທີ່ຈະໃຫ້ຄຳຕອບຕ່າງໆ ແລະ ສົນທະນາເລື້ອງໃບລາຍງານຄະແນນນີ້ ກັບພໍ່ແມ່.
- **ພໍ່ແມ່** ໂທຣຫາ ຫລື ມາຫາທີ່ໂຮງຮຽນໄດ້ ຖ້າເພິ່ນຫາກມີຄຳຖາມ ຫລື ຂໍ້ຂ້ອງໃຈຕ່າງໆກ່ຽວກັບ ການລາຍງານນີ້ແລ້ວ.
- **ພໍ່ແມ່** ກໍຮູ້ຈັກຊື່ຂອງນາຍຄຣູ ແລະ ຮູ້ວ່າ ຈະຕິດຕໍ່ໄດ້ແນວໃດ ຢູ່ທີ່ໂຮງຮຽນ (ໂດຍທາງໂທຣະສັບ, ທາງໄປສະນີ, ຫລື ໂດຍການນັດພົບກັນ.
- **ບັນດານາຍຄຣູ** ແລະ **ພະນັກງານໂຮງຮຽນ** ກໍມີເລື້ອງຂອງພໍ່ແມ່ ເພື່ອວ່າ ເພິ່ນຈະສາມາດປະຊາສັມພັນໄດ້ກ່ຽວເລື້ອງຄວາມກ້າວໜ້າຂອງນັກຮຽນນີ້.
- **ບັນດານາຍຄຣູ ກັບ ພໍ່ແມ່** ກໍສົນທະນາກັນ ເລື້ອງຄວາມກ້າວໜ້າ ແລະ ຄວາມເກັ່ງຂອງນັກຮຽນ, ບໍ່ແມ່ນແຕ່ສະເພາະຄວາມລົ້ມທະລາຍ ຫລື ຄວາມຂ້ອງໃຈເທົ່ານັ້ນ. ເພິ່ນຍັງສົນທະນາໄດ້ໃນເລື້ອງຍຸທວິທີຕ່າງໆ ເພື່ອຊ່ວຍເຫລືອນັກຮຽນ ໃຫ້ປັບປຸງແກ້ໄຂດີຂື້ນ.
- **ພໍ່ແມ່ ແລະ ນັກຮຽນທັງຫລາຍ** ກໍສົນທະນາກ່ຽວເລື້ອງການລາຍງານຄະແນນຮ່ວມກັນ ເພື່ອໃຫ້ຮູ້ຈັກເຖິງຄວາມກ້າວໜ້າ, ການທ້າທາຍ ຫລື ຄວາມຫຍຸ້ງຍາກ, ແລະ ຍຸທວິທີຕ່າງໆ ສຳຫລັບການປັບປຸງແກ້ໄຂໃຫ້ດີຂື້ນ ເໝາະສົມສຳຫລັບອາຍຸຂອງນັກຮຽນນັ້ນ.

**ຄວາມຄິດເຫັນອື່ນໆ:**

- ______________________________
- ______________________________

## 4. ການສອບເສັງຂັ້ນມາດຕະຖານ

### ການສອບເສັງຂັ້ນມາດຕະຖານ ແລະ ການວັດຜົນ

ນັກຮຽນໃນທຸກລະດັບຊັ້ນ ກໍໄດ້ສອບເສັງ ເພື່ອຕັດສິນວ່າ ສິ່ງໃດແດ່ທີ່ພວກຕົນໄດ້ຮຽນຜ່ານມາ. ອັນນີ້ກໍລວມທັງການສອບເສັງຂັ້ນມາດຕະຖານ ຫລື ການວັດຜົນ ຊຶ່ງໄດ້ເອົາໃຫ້ແກ່ນັກຮຽນ ທົ່ວທັງລັດ ແລະ ທົ່ວປະເທດນີ້. ບາງໂຮງຮຽນກໍໄດ້ເກັບລວບລວມເອົາຕົວຢ່າງວຽກຂອງນັກຮຽນຢູ່ໃນບັນຊີການຮຽນຂອງນັກຮຽນເຊັ່ນກັນ. ເຖິງຢ່າງໃດກໍຕາມ ການວັດຜົນອັນນີ້ ກໍບໍ່ມີຜົນກະທົບໃສ່ ໃບລາຍງານຄະແນນຂອງນັກຮຽນແຕ່ຢ່າງໃດເລີຍ, ມັນເປັນສິ່ງສຳຄັນສຳຫລັບ :

- ຊອກຮູ້ວ່າ ສິ່ງໃດແດ່ທີ່ນັກຮຽນຮູ້ ແລະ ສິ່ງໃດທີ່ພວກເຂົາ ຕ້ອງການຮຽນເອົາ.
- ອຳນວຍໃຫ້ມີວິທີການອັນໜຶ່ງ ແກ່ພໍ່ແມ່, ທາງໂຮງຮຽນ ແລະ ຜູ້ນຳຊຸມຊົນ ໃຫ້ຮູ້ຈັກວ່າ ນັກຮຽນ ແລະ ທາງໂຮງຮຽນນັ້ນ ກຳລັງເຮັດຫຍັງແດ່ ເມື່ອປຽບທຽບກັບບ່ອນອື່ນ ຢູ່ໃນລັດນີ້ ແລະ ໃນປະເທດນີ້ແລ້ວ.
- ຕັດສິນວ່າ ຄວາມພະຍາຍາມອັນໃດ ເປັນຜົນດີ ແລະ ອັນໃດ ອາດຈຳເປັນຕ້ອງປ່ຽນແປງ ຫລື ປັບປຸງໃຫ້ດີຂຶ້ນ.

ກົດໝາຍແຫ່ງຊາດວ່າດ້ວຍ ບໍ່ມີເດັກຄົນໃດເລີຍໄດ້ຖືກປ່ອຍປະໃຫ້ຢູ່ຂ້າງຫລັງ (NCLB)
ຮຽກຮ້ອງວ່າ ໃຫ້ທາງໂຮງຮຽນລັດ ໃຊ້ຂໍ້ສອບເສັງຂັ້ນມາດຕະຖານ ເພື່ອວັດແທກຄວາມສຳເຣັດຜົນໃນການຮຽນຂອງນັກຮຽນ. ຢູ່ໃນນະຄອນຊີອາໂຕ ພວກນັກຮຽນ ກໍສອບເສັງການປະເມີນຜົນການຮຽນຂອງນັກຮຽນແຫ່ງລັດວໍຊິງຕັນ ທີ່ເອີ້ນວ່າ ວໍໂຊລ (WASL) ໃນຍາມຣະດູໃບໄມ້ປົ່ງຂອງ ແຕ່ລະປີ ໂດຍເລີ່ມຕົ້ນໃນຊັ້ນປີທີ ສາມ ແລະ ສືບຕໍ່ໄປຈົນເຖິງມັທຍົມປາຍ. ຜົນຂອງການສອບເສັງຂອງນັກຮຽນນີ້ ໄດ້ສົ່ງ ອອກໄປໂດຍທາງໄປສະນີ ຫາພໍ່ແມ່.

ການວັດຜົນຢ່າງອື່ນອີກ ກໍໄດ້ເອົາໃຊ້ໂດຍທາງໂຮງຮຽນ ເພື່ອວັດແທກຄວາມກ້າວໜ້າຂອງນັກຮຽນ ລວມມີ:

- ການຊ່ວຍບອກໃຫ້ຮູ້ຢ່າງແຮງຂອງຄວາມຮູ້ດ້ານພາສາອັງກິດເບື້ອງຕົ້ນ (**DIBELS**): ການວັດຜົນຄວາມຮູ້ຄວາມຊຳນານ ດ້ານການອ່ານ ແລະ ຂຽນຂອງໂຮງຮຽນປະຖົມ
- ການສອບເສັງຄວາມເກັ່ງກ້າສາມາດດ້ານພາສາອັງກິດແຫ່ງລັດວໍຊິງຕັນ (**WLPT**): ແມ່ນເຄື່ອງມືໃນການວັດຜົນສຳຫລັບພວກນັກຮຽນທີ່ມີຄວາມຮູ້ຄວາມຊຳນານດ້ານພາສາອັງກິດຈຳກັດ
- ການວັດຜົນດ້ານການອ່ານແບບວິວັທນາການ (**DRA**)
- ການວັດຜົນດ້ານການຂຽນແບບຕຣົງຈຸດໂລດ (**DWA**)
- ການສອບເສັງຄຸນນະວຸດດ້ານຄວາມຮູ້ໃນໂຮງຮຽນຂັ້ນຕົ້ນ (**PSAT**): ການວັດຜົນດ້ານການອ່ານຂັ້ນວິທຍາໄລ ສຳຫລັບນັກຮຽນຂັ້ນມັທຍົມປາຍ



#### ເຄັດລັບ

- **ທາງໂຮງຮຽນ** ກໍແຈ້ງບອກໃຫ້ພໍ່ແມ່ຂອງນັກຮຽນຊາບນຳ ເລື້ອງຕາຕະລາງການວັດຜົນນັ້ນ .
- **ຜູ້ເປັນພໍ່ແມ່** ກໍຊ່ວຍນັກຮຽນ ໃຫ້ຕຽມພ້ອມສຳຫລັບການສອບເສັງ ດ້ວຍການໃຫ້ພັກຜ່ອນທີ່ສົມຄວນດີ ກິນອາຫານດີ ແລະ ມາຮອດໂຮງຮຽນຕາມເວລາ.
- **ທາງໂຮງຮຽນ** ກໍສົ່ງຜົນຄະແນນການສອບເສັງ WASL ອອກໄປໃຫ້ (ແລະ ຜົນການວັດຜົນອື່ນໆ) ແກ່ພໍ່ແມ່.
- **ທາງໂຮງຮຽນ** ແລະ **ກຸ່ມຊຸມຊົນຕ່າງໆ** ກໍຮັບຜິດຊອບເປັນເຈົ້າການຈັດການຮ່ຳຮຽນສົມມະນາຂຶ້ນ ເພື່ອຊ່ວຍພໍ່ແມ່ ໃຫ້ເຂົ້າໃຈອ່ານຜົນສອບເສັງ ຫລື ການວັດຜົນນີ້.
- **ພໍ່ແມ່** ກໍກວດເບິ່ງຄືນດ້ວຍຄວາມຣະມັດຣະວັງ ຜົນການສອບເສັງນັ້ນ ແລະ ປຽບທຽບກັນກັບ ປີທີ່ຜ່ານມາແລ້ວ ຖ້າຫາກມີ. ຖ້າມີຄຳຖາມ ຫລື ຂໍ້ຂ້ອງໃຈໃດໆແລ້ວ ຂໍຈົ່ງເອົາມານາຍຄູ, ທີ່ປຶກສາ ຫລື ພະນັກງານອື່ນໆຂອງໂຮງຮຽນໃຫ້ເບິ່ງຊ່ວຍ .
- **ພໍ່ແມ່** ກໍຮູ້ຈັກ ຖ້າວ່າຄະແນນຜົນການສອບເສັງຂອງລູກຕົນ ສຳຫລັບແຕ່ລະວິຊາຫາກຕົກຕ່ຳ , ຢູ່ຜ້ານກາງ, ຫລື ຣະດັບສູງ ເມື່ອປຽບທຽບກັບນັກຮຽນຄົນອື່ນໆ ຢູ່ໃນຣະດັບຊັ້ນດຽວກັນແລ້ວ.
- **ບັນດານາຍຄູ** ແລະ **ພໍ່ແມ່** ກໍສົນທະນາກັນ ເລື້ອງຜົນຂອງການວັດຜົນນີ້ ຢູ່ຕາມການປະຊຸມພໍ່ແມ່ - ນາຍຄູ ຫລື ກອງປະຊຸມອື່ນໆກັບພະນັກງານໂຮງຮຽນ. ພວກເພິ່ນກໍພັທນາຍຸທວິທີສະເພາະ ເພື່ອປັບປຸງການຮຽນຂອງນັກຮຽນໃຫ້ດີຂຶ້ນ.
- **ທາງໂຮງຮຽນ, ພໍ່ແມ່** ແລະ **ບັນດາຜູ້ນຳຊຸມຊົນ** ກໍມາຮ່ວມມືກັນ ເພື່ອກວດເບິ່ງຄືນ ຂໍ້ມູນຂອງຂໍ້ສອບເສັງຂອງໂຮງຮຽນ. ເພິ່ນກໍພັທນາການແກ້ໄຂແບບສ້າງສັນ ເພື່ອຊ່ວຍພວກນັກຮຽນ ແລະ ໂຮງຮຽນ ຊຶ່ງບໍ່ໄດ້ສະແດງອອກເຖິງຄວາມກ້າວໜ້າ ຢ່າງພຽງພໍນັ້ນ.

**ຄວາມຄິດຄວາມເຫັນອື່ນໆ:**

- ________________________________________
- ________________________________________

## 5. ແຜນການສຶກສາ ສໍາຫລັບນັກຮຽນສ່ວນບຸກຄົນ

### ເປົ້າໝາຍດ້ານວິຊາການ

ນັກຮຽນແຕ່ລະຄົນ ຄວນມີເປົ້າໝາຍທີ່ເໝາະສົມເອົາໄວ້ແຕ່ຕອນອາຍຸຍັງອ່ອນພີ້ ເພື່ອການສຶກສາ ແລກປ່ຽນກັບຄອບຄົວ ແລະ ທາງໂຮງຮຽນ. ດ້ວຍການຊີ້ນໍາ ແລະ ຊຸກຍູ້ແລ້ວ ພວກນັກຮຽນກໍຈະສາມາດໄປເຖິງເປົ້າໝາຍວິຊາການເຫລົ່ານີ້ໄດ້.

### ການຊຸກຍູ້ສນັບສນູນຈາກທາງໂຮງຮຽນ, ຄອບຄົວ ແລະ ອົງການຈັດຕັ້ງຊຸມຊົນ

ໃບລາຍງານຄະແນນ ແລະ ການວັດຜົນ ກໍອໍານວຍໃຫ້ຮູ້ຈັກເລື້ອງຂ່າວທີ່ສໍາຄັນ ເພື່ອນໍາພາບັນດານາຍຄຣູ, ຄອບຄົວ ແລະ ອົງການຈັດຕັ້ງຊຸມຊົນ ໃນການຊຸກຍູ້ເປົ້າໝາຍດ້ານວິຊາການຂອງນັກຮຽນ. ການຊຸກຍູ້ນີ້ ສາມາດເຮັດໄດ້ດ້ວຍຫລາຍຮູບການ. ຄວາມຄຸ້ນເຄີຍກັບຄອບຄົວນັກຮຽນແຕ່ລະຄົນ ແລະ ແຕ່ລະຄອບຄົວນັ້ນ ເປັນສິ່ງສໍາຄັນຫລາຍ ສໍາຫລັບການອໍານວຍໃຫ້ມີການຊຸກຍູ້ສນັບສນູນນີ້.

ພໍ່ແມ່ທັງຫລາຍ ກໍສາມາດຊ່ວຍໄດ້ ດ້ວຍການວາງແຜນການເສັ້ນທາງການສຶກສາຂອງນັກຮຽນ ຈາກບັນດານາຍຄຣູ, ທີ່ປຶກສາ, ພະນັກງານໂຮງຮຽນຄົນອື່ນໆ ແລະ ອົງການຈັດຕັ້ງຊຸມຊົນທັງຫລາຍ. ຢູ່ໃນໂຮງຮຽນຣັຖເມືອງຊີອາໂຕນີ້ ພໍ່ແມ່ກໍມີສິດ ທີ່ຈະເຂົ້າຮ່ວມນໍາການຕັດສິນທຸກຢ່າງ ທີ່ກ່ຽວຂ້ອງກັບເດັກຂອງຕົນ.



**ເຄັດລັບ**

- ນາຍຄຣູ ຊ່ວຍເຫລືອນັກຮຽນ ແລະ ຄອບຄົວ ໃຫ້ວາງເປົ້າໝາຍການຮຽນຂອງນັກຮຽນ ແລະ ສນັບສນູນ ຄວາມຄາດຝັນສູງ ສໍາຫລັບນັກຮຽນ.
- ທາງໂຮງຮຽນ ເອົາກອງປະຊຸມພໍ່ແມ່ - ນາຍຄຣູໃຫ້ ຫລື ກອງປະຊຸມກັບພໍ່ແມ່ ຊຶ່ງສນັບສນູນໃຫ້ມີຄວາມກ້າວໜ້າຂອງນັກຮຽນສືບຕໍ່ໄປ ແລະ ເວົ້າເຖິງບັນຫາ ຫລື ຄວາມທ້າທາຍຕ່າງໆ ທີ່ມີຂື້ນ.
- ດ້ວຍການສນັບສນູນຊຸກຍູ້ຂອງພະນັກງານໂຮງຮຽນ , **ພໍ່ແມ່** ກໍສອບສວນເບິ່ງ ທາງໃຫ້ເລືອກຂອງໂຮງຮຽນ, ໂຄງການແມັກເນັດຂອງໂຮງຮຽນ, ຫ້ອງໃຫ້ເລືອກຕາມໃຈ ແລະ ການເລືອກເອົາອື່ນໆອີກພາຍໃນໂຮງຮຽນຣັຖນີ້ ເພື່ອຕັດສິນເອົາທິດທາງທີ່ດີສຸດຂີດ ສໍາຫລັບນັກຮຽນທັງຫາຍ.
- **ບັນດາພໍ່ແມ່** ກໍຊອກສະແຫວງເອົາໂອກາດອັນດີ ເພື່ອເຮັດໃຫ້ຫລັກສູດການຮຽນນັ້ນອຸດົມຂື້ນ ດ້ວຍໂຄງການຕ່າງໆ ແລະ ບໍຣິການຢູ່ໃນສັງຄົມຊຸມຊົນນັ້ນ ສໍາຫລັບນັກຮຽນ ເຊັ່ນ ກິລາ, ສິລປະ, ດົນຕຣີ ແລະກິຈກັມບໍຣິການຊຸມຊົນ.
- **ພະນັກງານໂຮງຮຽນ** ແລະ **ອົງການຈັດຕັ້ງຊຸມຊົນ** ກໍຊ່ວຍພໍ່ແມ່ ໃຫ້ຮູ້ຈັກ ໂອກາດອັນດີ ຢູ່ໃນຊຸມຊົນ ເພື່ອຊຸກຍູ້ສນັບສນູນເປົ້າໝາຍການສຶກສານັ້ນ.
- **ທາງໂຮງຮຽນ, ພໍ່ແມ່** ແລະ **ອົງການຈັດຕັ້ງຊຸມຊົນ** ເຮັດວຽກຮ່ວມກັນ ເພື່ອຮັບປະກັນໂຄງການຕ່າງໆ ທັງຢູ່ໃນ ແລະ ນອກໂຮງຮຽນ ໃຫ້ເປັນສິ່ງທີ່ດີສຸດຂີດ ສໍາຫລັບເດັກ.
- **ບັນດາພໍ່ແມ່, ນາຍຄຣູ, ທີ່ປຶກສາ ແລະ ອົງການຈັດຕັ້ງຊຸມຊົນ** ກໍເຮັດວຽກຮ່ວມກັນ ເພື່ອຈັດຕຽມພວກນັກຮຽນ ສໍາຫລັບເຂົ້າວິທຍາໄລ ແລະ ການເລືອກເອົາອື່ນໆ ຫລັງຈາກມັທຍົມປາຍແລ້ວ .

<u>ຄວາມຄິດຄວາມເຫັນອື່ນໆ:</u>

- ____________________________________________
- ____________________________________________

## 6. ໂຄງການ ແລະ ການຊ່ວຍເຫລືອແກ່ນັກຮຽນ

ການຊ່ວຍສິດສອນເພີ່ມພິເສດ ແລະ ການຊ່ວຍເຫລືອຕ່າງໆ

ໂຄງການຫລາຍໆຢ່າງຫລັງຈາກເລີກໂຮງຮຽນ, ຍາມພັກທ້າຍສັປດາ ແລະ ຍາມຣະດູຮ້ອນ ກໍມີໃຫ້ແກ່ນັກຮຽນທັງຫລາຍ. ການສິດສອນເພີ່ມພິເສດ ແລະ ໂຄງການອື່ນໆ ອາດເອົາໃຫ້ໄດ້ ໂດຍທາງໂຮງຮຽນ, ຕາມສູນກາງຊຸມຊົນ ຕາມໂບດທ້ອງຖິ່ນ ແລະ ຈາກແຫລ່ງຊັພຍາກອນອື່ນໆອີກ.

ພໍ່ແມ່ສາມາດຊອກຫາເອົາໄດ້ ການເລືອກຕ່າງໆ ສຳຫລັບເດັກຂອງຕົນ ໂດຍຕິດຕໍ່ກັບທາງໂຮງຮຽນ, ອົງການຈັດຕັ້ງຊຸມຊົນທ້ອງຖິ່ນ ແລະ ນຳພໍ່ແມ່ຄົນອື່ນໆອີກ. ໂຄງການອັນໃດອັນໜຶ່ງນັ້ນ ກໍສາມາດເລືອກເອົາໄດ້ ໂດຍອີງໃສ່ຄວາມຕ້ອງການຂອງນັກຮຽນ, ຄວາມໄດ້ຮັບສິດທິ, ສະຖານທີ່ຢູ່, ຄ່າໃຊ້ຈ່າຍ ແລະ ອົງປະກອບອື່ນໆ.

ກົດໝາຍເລື້ອງບໍ່ມີເດັກຄົນໃດເລີຍໄດ້ຖືກປ່ອຍປະໃຫ້ຢູ່ຂ້າງຫລັງນີ້ (NCLB) ກໍຮຽກຮ້ອງວ່າ ທາງໂຮງຮຽນອຳນວຍໃຫ້ມີການສິດສອນເພີ່ມພິເສດແບບບໍ່ເສັຍຄ່າ ແກ່ພວກເດັກນ້ອຍ ທີ່ຕ້ອງການຄວາມຊ່ວຍເຫລືອ ຖ້າວ່າ ໂຮງຮຽນຫາກໄດ້ຖືກພິສູດພົບໄດ້ແລ້ວ ໂດຍຂັ້ນຣັຖ ວ່າ "ຕ້ອງການປັບປຸງໃຫ້ດີຂື້ນ" ເປັນເວລາ ສາມປີ ຫລື ຫລາຍກວ່ານັ້ນ.
ພໍ່ແມ່ອາດຖາມເບິ່ງໄດ້ ວ່າ ບໍຣິການເຫລົ່ານີ້ (ເອີ້ນວ່າ "ບໍຣິການດ້ານການສຶກສາເພີ່ມເຕີມ") ຫາກມີໃຫ້ຢູ່ທີ່ໂຮງຮຽນຂອງເດັກຕົນຫລືບໍ່.

**ທີມເຂົ້າແຊກແຊງນຳຂອງນັກຮຽນ (SIT)** ໄດ້ຖືກແຕ່ງຕັ້ງຂື້ນ ເພື່ອຊອກເອົາການແກ້ໄຂບັນຫາຕ່າງໆທີ່ເໝາະສົມ ສຳຫລັບນັກຮຽນ ທີ່ມີຄວາມຫຍຸ້ງຍາກ ຢູ່ໃນຫ້ອງຮຽນ. ທີມເຫລົ່ານີ້ ອາດລວມເອົາທັງ ນັກຮຽນ, ພໍ່ແມ່, ນາຍຄູ, ທີ່ປຶກສາ ແລະ ພະນັກງານຄົນອື່ນໆຂອງໂຮງຮຽນ.

**ແຜນການສຶກສາແບບສ່ວນຕົວບຸກຄົນ (IEP)** ກໍຖືກພັທນາຂື້ນ ເພື່ອໃຫ້ຄວາມອຸປະຖັມຄ້ຳຊູ ແກ່ພວກນັກຮຽນຜູ້ມີຄວາມທ້າທາຍໃນການຮ່ຳຮຽນແບບສະເພາະພິເສດ ຫລື ມີຄວາມດ້ອຍສມັຖພາບ ໂດຍອຳນວຍໃຫ້ມີ ໂຄງການຮຽນ ແລະ ບໍຣິການທີ່ເໝາະສົມ. ທີມ IEP ນີ້ ໄດ້ຖືກສ້າງຕັ້ງຂື້ນ ໂດຍທີມພໍ່ແມ່-ໂຮງຮຽນ ແລະ ກວມລວມເອົາທັງ ອົງການຈັດຕັ້ງຊຸມຊົນອື່ນໆ ຖ້າຕ້ອງການ.



ເຄັດລັບ

- **ບັນດາພໍ່ແມ່, ພະນັກງານໂຮງຮຽນ ແລະ ອົງການຈັດຕັ້ງຊຸມຊົນ** ເຮັດວຽກຮ່ວມກັນ ເພື່ອຊອກພົບການແກ້ໄຂບັນຫາຕ່າງໆ ສຳຫລັບນັກຮຽນທີ່ຕ້ອງການບໍຣິການພິເສດ.
- **ພໍ່ແມ່** ແຈ້ງໃຫ້ນາຍຄູຊາບນຳ ກ່ຽວເລື້ອງຄວາມກ້າວໜ້າໃນການຮຽນ ທີ່ນັກຮຽນໄດ້ເຂົ້າຮ່ວມນຳ ຢູ່ທາງຂ້າງນອກໂຮງຮຽນ.
- **ພໍ່ແມ່, ພະນັກງານໂຮງຮຽນ ແລະ ຜູ້ໃຫ້ບໍຣິການຕ່າງໆ** ປະຊາສັມພັນກັນແບບປົກກະຕິ ເພື່ອ ໃຫ້ຄັກແນ່ວ່າ ແຕ່ລະຄົນຮູ້ຈັກວ່າ ເຮັດແນວໃດນັກຮຽນຮຽນກ້າວໜ້າດີ ແລະ ຖ້າຕ້ອງການ ປ່ຽນແປງ.

<u>ຄວາມຄິດຄວາມເຫັນອື່ນໆ:</u>

- ______________________________
- ______________________________

## 7. ການປັບປຸງຕ່າງໆຂອງເຂດສຶກສາ

### ເຮັດໃຫ້ໂຮງຮຽນດີຂື້ນ

ເພື່ອປັບປຸງການສຶກສາໃຫ້ດີຂື້ນ ສຳຫລັບເດັກແຕ່ລະຄົນນັ້ນ ລະບົບໂຮງຮຽນຕ້ອງໄດ້ປັບປຸງໃຫ້ດີຂື້ນຢ່າງສມ່ຳສເມີ. ບັນດານັກຮຽນ, ພໍ່ແມ່, ຜູ້ນຳຊຸມຊົນ ແລະ ພະນັກງານໂຮງຮຽນ ຈຳເປັນຕ້ອງໄດ້ປະຊາສັມພັນກັນ ໃນເລື້ອງບັນຫາທີ່ຕົນໄດ້ປະສົບມາ, ໃຫ້ຄວາມຄິດຄວາມເຫັນ ເລື້ອງການປັບປຸງ ແລະ ເຂົ້າຮ່ວມໃນການແກ້ໄຂບັນຫາ ສຳຫລັບເຮັດໃຫ້ໂຮງຮຽນນັ້ນດີຂື້ນ.

ກົດໝາຍກ່ຽວກັບວ່າ ບໍ່ມີເດັກຄົນໃດເລີຍທີ່ໄດ້ຖືກປ່ອຍປະລະຖິ້ມໃຫ້ຢູ່ທາງຫລັງ (NCLB) ນີ້ ຮຽກຮ້ອງໃຫ້ເຂດສຶກສາ ເອົາພໍ່ແມ່ເຂົ້າມາຮ່ວມນຳໃນການວາງແຜນປັບປຸງໂຮງຮຽນ. ທາງເຂດສຶກສາ ກໍຕ້ອງພິມອອກເຜີຍແຜ່ໃບລາຍງານຄະແນນການຮຽນ ເຊັ່ນກັນ ບອກພໍ່ແມ່ ແລະ ຊຸມຊົນວ່າ ໂຮງຮຽນແຕ່ລະແຫ່ງກຳລັງເຮັດວຽກກັນແນວໃດຢູ່. ໃບລາຍງານຄະແນນການຮຽນນັ້ນ ກໍລວມເອົາຜົນການສອບເສັງ WASL ອີກດ້ວຍ ສຳຫລັບໂຮງຮຽນ ແລະ ເລື້ອງຂ່າວອື່ນໆເຊັ່ນ ຈຳນວນນັກຮຽນ ຕໍ່ນາຍຄຣູຜູ້ໜຶ່ງ ແລະ ເປີເຊັນຂອງນັກຮຽນ ທີ່ຮຽນຈົບຊັ້ນມັທຍົມປາຍ. ຂໍ້ມູນອັນນີ້ ສາມາດຊ່ວຍພິສູດເບິ່ງວ່າ ສິ່ງໃດເຮັດວຽກໄດ້ດີ ຢູ່ໃນໂຮງຮຽນ ແລະ ສິ່ງໃດທີ່ຕ້ອງການໃຫ້ປັບປຸງດີຂື້ນ.

ເວລາບັນດາພໍ່ແມ່, ໂຮງຮຽນ ແລະ ອົງການຈັດຕັ້ງຊຸມຊົນ ກວດເບິ່ງຄືນຂໍ້ມູນ ແລະ ແຜນການປັບປຸງໂຮງຮຽນຮ່ວມກັນຢູ່ນັ້ນ ເພິ່ນກໍຮັບປະກັນໄດ້ ເຖິງຄວາມສຳເຣັດຜົນຂອງໂຮງຮຽນ ແລະ ເດັກແຕ່ລະຄົນ.



**ເຄັດລັບ**

- **ໂຮງຮຽນ** ແລະ **ພໍ່ແມ່** ໄດ້ສ້າງຂື້ນເປັນ ສະມາຄົມພໍ່ແມ່ - ນາຍຄຣູ (PTAs) ຢູ່ຕາມແຕ່ລະໂຮງຮຽນ ຊຶ່ງ ລວມເອົາຄອບຄົວທັງຫລາຍເຂົ້າມາໃນໂຮງຮຽນນຳ. ພວກເພິ່ນກໍພັທນາ ປະຕິທິນອັນໜຶ່ງຊຶ່ງຊຸກຍູ້ໃຫ້ ເກີດຄວາມສຳເຣັດຜົນຂອງນັກຮຽນ ແລະ ໂຮງຮຽນ.
- **ບັນດາໂຮງຮຽນ, ພໍ່ແມ່ ແລະ ຜູ້ນຳຊຸມຊົນ** ຕ່າງກໍໄດ້ເຂົ້າມາປະກອບສ່ວນ ຢູ່ໃນກອງປະຊຸມ ເພື່ອເບິ່ງຄືນ ແລະ ສົນທະນາຮ່ວມກັນ ກ່ຽວເລື້ອງຂໍ້ມູນການເຮັດວຽກງານຂອງໂຮງຮຽນ. ພວກເພິ່ນກໍພິສູດເຫັນຜົນສຳເຣັດຫລາຍຢ່າງ ທີ່ໄດ້ເຂົ້າມາສນັບສນູນນີ້ ແລະ ໄດ້ເຂົ້າມາແກ້ໄຂບັນຫາຕ່າງໆດ້ວຍ.
- **ພະນັກງານໂຮງຮຽນ** ແລະ **ພໍ່ແມ່** ພັທນາແຜນການລົດຮັບສິ່ງຂອງໂຮງຮຽນຫລາຍອັນ ສຳຫລັບແຕ່ລະໂຮງຮຽນ, ແຕ່ລະປີ, ຊຶ່ງພິສູດເຖິງສິ່ງທີ່ຕ້ອງເຮັດກ່ອນອື່ນໝົດ ແລະ ບາດກ້າວສະເພາະພິເສດ ເພື່ອປັບ ປຸງສິ່ງເສີມໂຮງຮຽນໃຫ້ດີຂື້ນ.
- **ພະນັກງານໂຮງຮຽນ** ແລະ **ພໍ່ແມ່** ກໍມີສ່ວນນຳກັນ ໃນການຕັດສິນຢູ່ທີ່ໂຮງຮຽນ, ລວມທັງຈະຈ່າຍເງິນແນວໃດ (ງົບປະມານຂອງໂຮງຮຽນ)
- **ພໍ່ແມ່** ເຂົ້າຮ່ວມນຳຢ່າງຫ້າວຫັນ ໃນຄະນະກັມການ ຫລື ສະພາທີ່ປຶກສາ ເພື່ອໃຫ້ຄຳປຶກສາ ແກ່ທາງໂຮງຮຽນຣັຖເມືອງຊີອາໂຕ ກ່ຽວກັບບັນຫາຕ່າງໆ ຕັ້ງແຕ່ເລື້ອງລົດຮັບສົ່ງ ແລະ ສິ່ງທີ່ອຳນວຍຄວາມສະດວກຕ່າງໆພື້ ໄປເຖິງ ການພັທນາໂຄງການໃໝ່ ແລະ ນະໂຍບາຍຕ່າງໆອີກດ້ວຍ.
- **ພໍ່ແມ່** ກໍຮູ້ຈັກນຳ ວ່າ ເວລາໃດມີການປະຊຸມຂອງຄະນະສະພາອຳນວຍການສຶກສາ. ພໍ່ແມ່ ກໍອອກສຽງຄວາມຄິດເຫັນຂອງຕົນ ແລະ ກັບກາຍມາເຂົ້າຮ່ວມນຳ ການແກ້ບັນຫາຕ່າງໆຂອງທາງໂຮງຮຽນຣັຖເມືອງຊີອາໂຕ.
- ອົງການຈັດຕັ້ງຊຸມຊົນ ພິສູດ ແລະ ປະຊາສັມພັນ ເລື້ອງຄວາມຕ້ອງການຂອງການສຶກສາ ແລະ ໂອກາດຕ່າງໆ ໂດຍອີງໃສ່ວຽກງານຂອງຕົນຢູ່ໃນຊຸມຊົນ ແລະ ຕາມພື້ນທີ່ຄວາມຊຳນິຊຳນານນັ້ນ. ເພິ່ນຊ່ວຍພິສູດເຫັນ ການແກ້ບັນຫາ ຊຶ່ງສາມາດເຮັດວຽກໄດ້ຮ່ວມກັນ ກັບພໍ່ແມ່ ແລະ ທາງໂຮງຮຽນ.

<u>**ຄວາມຄິດຄວາມເຫັນອື່ນໆ:**</u>

- ______________________________
- ______________________________

# 8. ຄຳຖາມ ແລະ ຂໍ້ຂ້ອງໃຈຕ່າງໆ

## ການຕິດຕໍ່ພົວພັນກັນ

ການຕິດຕໍ່ພົວພັນກັນທີ່ດີ ຣະຫວ່າງພໍ່ແມ່, ໂຮງຮຽນ ແລະ ອົງການຈັດຕັ້ງຊຸມຊົນ ແມ່ນຈຳເປັນ ສຳຫລັບທີ່ຈະກໍ່ສ້າງ ຣະບົບການສນັບສນູນການສຶກສາທີ່ເຂັ້ມແຂງ ສຳຫລັບນັກຮຽນທັງຫລາຍ. ແຕ່ລະຄົນທີ່ເຂົ້າມາຮ່ວມນຳໃນຣະບົບການນີ້ ຕ້ອງໄດ້ແລກປ່ຽນເລື້ອງກັນ, ຕັ້ງຄຳຖາມ ແລະ ເຮັດວຽກຮ່ວມກັນ ເພື່ອຊອກຮູ້ການແກ້ໄຂ ຊຶ່ງມັນໃຫ້ຜົນປໂຍດແກ່ນັກຮຽນ.

### ເຄັດລັບ

- **ພໍ່ແມ່ ແລະ ນາຍຄຣູ** ພົບປະກັນ ແບບສ່ວນຕົວ ຕອນເລີ່ມເປີດໂຮງຮຽນໃໝ່ ຕາມເວລາເປີດໃຫ້ມາຢ້ຽມຢາມ ໂຮງຮຽນ ຫລື ຕອນເປີດແນະນຳຕ້ອນຮັບນັ້ນ, ປະຊຸມທີ່ໄດ້ວາງຕາຕະລາງອອກແລ້ວຢູ່ທີ່ບ້ານ ຫລື ໂຮງຮຽນ, ຫລື ຕາມທີ່ປະຊຸມຢູ່ໃນຊຸມຊົນ .
- **ທາງໂຮງຮຽນ** ອຳນວຍໂອກາດໃຫ້ ສຳຫລັບພໍ່ແມ່ ເພື່ອມາພົບກັບຫົວໜ້າໂຮງຮຽນກ່ອນແດ່ໃນສົກຮຽນນັ້ນ.
- **ພໍ່ແມ່, ພະນັກງານໂຮງຮຽນ ຫລື ພະນັກງານຂອງອົງການຈັດຕັ້ງຊຸມຊົນ** ໃຫ້ເຮັດການນັດພົບໄວ້ ກ່ອນລ່ວງ ໜ້າ (ຖ້າເປັນໄປໄດ້) ໃນເມື່ອເພິ່ນຫາກມີຄຳຖາມ ຫລື ຂໍ້ຂ້ອງໃຈຕ່າງໆ ກ່ຽວກັບ ຄວາມກ້າວໜ້າໃນການ ຮຽນຂອງນັກຮຽນ ເພື່ອສົນທະນາຊຶ່ງກັນ ແລະ ກັນ.
- **ພໍ່ແມ່, ພະນັກງານໂຮງຮຽນ ແລະ ພະນັກງານຂອງອົງການຈັດຕັ້ງຊຸມຊົນ** ປ່ອຍໃຫ້ມີເວລາແດ່ ໃນການ ສົນທະນາ ຫລື ການປະຊຸມກັນໃດໆ ເພື່ອຟັງຊຶ່ງກັນ ແລະ ກັນ.
- **ທາງໂຮງຮຽນ** ກໍເກັບກຳເລື້ອງຂອງນັກຮຽນໄວ້ໃຫ້ເປັນສິ່ງລັບສະເພາະ ໂດຍເປັນໄປຕາມນະໂຍບາຍແບບສ່ວນ ຕົວຂອງໂຮງຮຽນຣັຖເມືອງຊີອາໂຕ.
- **ພໍ່ແມ່, ນາຍຄຣູ** ແລະ **ພະນັກງານໂຮງຮຽນ** ອື່ນໆ ກໍພະຍາຍາມທີ່ຈະແກ້ໄຂຄຳຖາມ, ຂໍ້ຂ້ອງໃຈຕ່າງໆ ທີ່ກ່ຽວ ຂ້ອງກັບນັກຮຽນສ່ວນບຸກຄົນ ກ່ອນຈະເຂົ້າເຖິງຫົວໜ້າໂຮງຮຽນນັ້ນ.
- **ພໍ່ແມ່** ຫລື ຜູ້ຕາງໜ້າຈາກ **ອົງການຈັດຕັ້ງຊຸມຊົນ** ທີ່ມີຄຳຖາມ ຫລືຂໍ້ຂ້ອງໃຈທີ່ຍັງແກ້ໄຂບໍ່ທັນໄດ້ນັ້ນ ຈົ່ງຕິດ ຕໍ່ກັບພະແນກບໍຣິການຂອງໂຮງຮຽນຣັຖເມືອງຊີອາໂຕໄດ້ ທີ່ (206) 252-0010.

__ຄວາມຄິດຄວາມເຫັນອື່ນໆ:__

- ________________________________________
- ________________________________________



# ແຫລ່ງໃຫ້ຄວາມຊ່ວຍເຫລືອເພີ່ມເຕີມອີກ

## ນະໂຍບາຍໃນການເຂົ້າຮ່ວມເປັນຂາຄູ່ນຳຂອງຄອບຄົວຂອງໂຮງຮຽນຣັຖເມືອງຊີອາໂຕ

*"ນີ້ແມ່ນນະໂຍບາຍຂອງສະພາອຳນວຍການຂອງໂຮງຮຽນຣັຖເມືອງຊີອາໂຕ ເພື່ອໃຫ້ກຳລັງໃຈ ແລະ ສນັບສນູນການເຂົ້າຮ່ວມ ພົວພັນນຳຂອງຄອບຄົວໃນການສຶກສາ, ຢູ່ທີ່ບ້ານ, ຢູ່ທີ່ໂຮງຮຽນ ແລະ ຊຸມຊົນຂອງພວກເຮົາ, ແລະ ຢູ່ຕາມຫ້ອງການປົກຄອງ ຂອງໂຮງຮຽນ. ທາງສະພາອຳນວຍການຮູ້ຈັກຄວາມແຕກຕ່າງກັນຂອງໂຄງສ້າງຄອບຄົວຕ່າງ, ສະພາບການ, ແລະ ຄວາມ ເປັນມາດ້ານວັທນະທັມ ແລະ ຂໍຄຳນັບ ນັບຖືບັນດາຄອບຄົວ ເໝືອນດັ່ງຜູ້ຕັດສິນໃຈທີ່ສຳຄັນ ສຳຫລັບການສຶກສາຂອງເດັກຕົນ. ທາງສະພາອຳນວຍການ ກໍມີຄວາມຮັບຜິດຊອບຕໍ່ການກໍ່ສ້າງ ແລະ ການສນັບສນູນໃນການເຂົ້າຮ່ວມເປັນຂາຄູ່ນຳ ຂອງ ຄອບຄົວຢ່າງເຕັມສ່ວນ ແລະ ມີປະສິດທີຜົນດີຕາມວັທນະທັມ ໂດຍຕລອດທົ່ວເຂດສຶກສາ ແລະ ຕາມໂຮງຮຽນແຕ່ລະແຫ່ງ, ແລະ ຍັງເຊື່ອວ່າ ການເຂົ້າຮ່ວມເປັນຂາຄູ່ອັນນີ້ ຈະເປັນສິ່ງທີ່ວິພາກວິຈານ ຕໍ່ກັບຄວາມສຳເຣັດຜົນຂອງນັກຮຽນແຕ່ລະຄົນ."*

(ນະໂຍບາຍຂອງໂຮງຮຽນຣັຖເມືອງຊີອາໂຕ F05.00, ດັດແປງອອກໃຊ້ ໃນເດືອນສິງຫາ ປີ 2004)

ນະໂຍບາຍຂອງສະພາອຳນວຍການໂຮງຮຽນເພີ່ມເຕີມເຂົ້າອີກ ແກ່ຄວາມສົນໃຈຂອງພໍ່ແມ່ ແລະ ຊຸມຊົນ ລວມມີ:

- ການສົນທະນາກັບຊຸມຊົນ
- ກຸ່ມ ແລະ ຄະນະກັມມະການໃຫ້ຄຳປຶກສາຂອງພົລເມືອງ
- ວິທີດຳເນີນການຂອງຄະນະກັມມະການໃຫ້ຄຳປຶກສາຂອງພົລເມືອງ
- ວິທີດຳເນີນການໃນການຮ້ອງທຸກຂອງພົລເມືອງ
- ຄວາມຮ່ວມໄມ້ຮ່ວມມືຂອງຊຸມຊົນ
- ອົງການຈັດຕັ້ງຂອງພໍ່ແມ່ ກັບ ນາຍຄຣູ
- ການເຂົ້າຮ່ວມນຳຂອງປວງຊົນ ໃນການປະ ຊຸມ ຄະນະອຳນວຍການ
- ການໃຊ້ຜູ້ອາສາສມັກ
- ແຂກມາຫາໂຮງຮຽນ

ອັນນີ້ ແລະ ນະໂຍບາຍອື່ນໆ ທີ່ກ່ຽວຂ້ອງກັບນັກຮຽນ, ໂຮງຮຽນ ແລະ ການຮໍ່າຮຽນ ສາມາດເບິ່ງຄືນໄດ້ ຢູ່ຕາມເວັບຊ່າຍຂອງ ໂຮງຮຽນຣັຖເມືອງຊີອາໂຕ (www.seattleschools.org) ຫລື ໂດຍຕິດຕໍ່ກັບຫ້ອງການປົກຄອງສູນກາງ.

## ແຫລ່ງໃຫ້ຄວາມຊ່ວຍເຫລືອເພີ່ມເຕີມອີກ

- ຈົ່ງຕິດຕໍ່ກັບຫ້ອງການໂຮງຮຽນທ້ອງຖິ່ນຂອງທ່ານ ຫລື ສູນກາງປົກຄອງຂອງໂຮງຮຽນຣັຖເມືອງຊີອາໂຕ:

  Seattle Public Schools
  John Stanford Center for Educational Excellence
  2445 3rd Avenue South
  PO Box 34165, Seattle, WA 98134
  (206) 252-0000
  www.seattleschools.org

- ຫໍສມຸດສາທາຣະນະແຫ່ງເມືອງຊີອາໂຕ (ຕາມສະຖານທີ່ຕ່າງໆ ຈົນເຖິງຕົວເມືອງຊີອາໂຕ)
- ບໍ່ມີເດັກຄົນໃດເລີຍທີ່ໄດ້ຖືກປ່ອຍປະລະຖິ້ມເສັຍ (www.nclb.gov)
- ສະມາຄົມພໍ່ແມ່ ນາຍຄຣູແຫ່ງຊາດ (www.pta.org)
- ສູນກາງໃຫ້ການຝຶກຝົນອົບຣົມ ແລະ ຊ່ວຍເຫລືອ ແກ່ຊຸມຊົນ (www.ctacusa.com)

ຄວາມຄິດຄວາມເຫັນຕ່າງໆ:

- ______________________________
- ______________________________



## ຂຽນບັນທຶກ